# ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດ ທີ 30 ພຶສພາ 2010 (5-30-2010)**

---

## ຈາກມື້ນີ້ເປັນຕົ້ນໄປ

**ຂໍ້ພຣະຄັມພີໃນບົດຮຽນ:** ເພງສັຣເສີນ 51:6-10; ຍອດເພງ 2:15; ກິຈການ 18:24-26; ໂຣມ 16:3-5ກ

## ບົດຮຽນນີ້ມີຜົນສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ

ບົດຮຽນນີ້ສາມາດຊ່ວຍບັນດາຜູ້ທີ່ເຖິງກະສຽນໃນການສ້າງພື້ນຖານສຳລັບການມີຄວາມເພິ່ງພໍໃຈ, ການເຕີບໃຫຍ່ຂຶ້ນໃນຄວາມສັມພັນຂອງຊີວິດແຕ່ງງານ.

## ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ບົດຮຽນນີ້ແມ່ນກ່ຽວກັບທົນທາງຕ່າງໆທີ່ຜົວ ແລະເມັຽສາມາດສ້າງພື້ນຖານເພື່ອການເຕີບໃຫຍ່ຂຶ້ນໃນຄວາມສັມພັນຂອງຊີວິດແຕ່ງງານ.

## ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ບົດຮຽນນີ້ສຳຄັນເພາະວ່າມີຄູ່ແຕ່ງງານນັບເປັນຈຳນວນຫຼາຍທີ່ມີບັນຫາ. ມີຫຼາຍຄູ່ກໍກຳລັງມຸ້ງສູ່ການຢ່າຮ້າງຖ້າວ່າບໍ່ມີການປ່ຽນແປງ. ມີຄູ່ແຕ່ງງານຫຼາຍຄູ່ທີ່ບໍ່ຢ່າຮ້າງແຕ່ຍັງຢູ່ຮ່ວມກັນໃຕ້ສາຍຄາອັນດຽວກັນ. ຂໍ້ຂັດແຍ້ງ, ຄວາມເສີຍຊາ, ແລະຂາດການແບ່ງປັນຈຸດໝາຍປາຍທາງນີ້ເປັນພຽງສອງສາມຢ່າງທີ່ທຳລາຍການເປັນນຶ່ງດຽວກັນທີ່ເຮັດໃຫ້ຜົວແລະເມັຽຂາດຈາກການມີປະສົບການໃນຄວາມເພິ່ງພໍໃຈໃນຊີວິດແຕ່ງງານ.

ມີຄູ່ແຕ່ງງານນຶ່ງທີ່ຂ້າພະເຈົ້າຮ້ອງວ່າ ບອບແລະແຄຣີໄດ້ພາກັນມານັ່ງໃນຫ້ອງການຂອງຂ້າພະເຈົ້າ, ຊຶ່ງໄດ້ຕົກໃນພາວະທີ່ຄັບຂັນ. ບອບໄດ້ຫຼິ້ນສາວໃນຫ້ອງການຂອງລາວ, ແລະເມື່ອລາວເລີກແລ້ວຍິງນັ້ນກໍໄດ້ໂທຣຫາແຄຣີແລະໄດ້ບອກເຣື່ອງທຸກຢ່າງ. ແຄຣີໄດ້ຮັບຄວາມເຈັບປວດແລະເຄືອງແຄ້ນຫຼາຍ; ບອບກໍສາຣະພາບເຣື່ອງທັງໝົດ, ຕົກໃນພາວະຄັບຂັນຕໍ່ຄວາມໂງ່ງ່າວຂອງຕົນ, ແລະຢ້ານທີ່ຈະສູນເສັຽຄອບຄົວຂອງລາວ.

ຕໍ່ມາອີກສອງປີ; ພວກເຮົາໄດ້ເຫັນທັງຄູ່ມີຄວາມຮັກກັນອີກເທື່ອນຶ່ງ, ນຳພາກຸ່ມເດັກນ້ອຍໃນໂບດ, ນັ່ງຄຽງຂ້າງກັນຍາມນະມັສການ, ແລະກໍໄດ້ເອົາຄວາມເຈັບປວດຖິ້ມໄວ້ເບື້ອງຫຼັງຂອງພວກເຂົາ. ມັນເປັນໄປໄດ້ຢ່າງໃດ? ພວກເຂົາໄດ້ໃຊ້ເຫດການນັ້ນເບິ່ງໃນຊີວິດແຕ່ງງານຂອງພວກເຂົາຢ່າງໃກ້ຊິດ, ພວກເຂົາເຕັມໃຈໃນການປ່ຽນແປງ, ແລະພວກເຂົາໄດ້ມີຄວາມເຊື່ອວ່າພຣະເຈົ້າສາມາດຊ່ວຍໄດ້.

## <u>ສຶກສາພຣະຄັມພີ</u>

**1.<u>ສາຣະພາບແລະຖິ້ມໃຈເກົ່າເອົາໃຈໃໝ່</u>** (ເພງສັຣເສີນ 51:6-10)

ຊາຍທີ່ໄດ້ປະເຊີນໜ້າກັບໂກລີອາດແລະຜູ້ທີ່ພຣະເຈົ້າດົນໃຈໃຫ້ຂຽນພຣະທັມເພງສັຣເສີນເໝືອນແປວໄຟຕິດຕໍ່ຄຳສັຣເສີນຂອງອິສຣາເອນກໍມີຊ່ວງທີ່ອ່ອນແອ. ດັ່ງທີ່ໄດ້ບັນທຶກເຣື່ອງໄວ້ໃນ 2 ຊາມູເອນ 11-12, ພວກເຮົາພົບວ່າດາວິດບໍ່ໄດ້ຢູ່ຮ່ວມກັບພວກກອງທະຫານຂອງລາວຊຶ່ງເປັນບ່ອນທີ່ລາວຄວນຈະຢູ່; ແທນທີ່, ລາວໄດ້ຢູ່ໃນກຸງເຢຣູຊາເລັມມີຕັນຫາກັບຜູ້ຍິງທີ່ອາບນ້ຳ, ເບັດຊີບາ. ລາວໄດ້ອອກຄຳສັ່ງໃຫ້ນຳນາງມາພຣະຣາຊວັງແລະພວກເຂົາກໍໄດ້ນອນນຳກັນ. ຍິງນັ້ນກໍຕັ້ງທ້ອງແລະເມື່ອລາວບໍ່ສາມາດບັງຄັບຜົວຂອງນາງ, ອູຣາຍອາ, ນຶ່ງໃນຈຳນວນທະຫານ "ເກັ່ງກ້າ" ຂອງລາວ, ໃຫ້ໄປນອນກັບນາງ, ດາວິດກໍໄດ້ສັ່ງລາວໄປແນວໜ້າໃນສນາມຮົບແລະໄດ້ຖືກຂ້າຕາຍ.

ຕໍ່ຈາກນັ້ນດາວິດກໍໄດ້ນຳເອົານາງເບັດຊີບາມາຢູ່ໃນພຣະຣາຊວັງໃຕ້ສາກບັງໜ້າຂອງເມັຽທະຫານທີ່ຖືກຂ້າຕາຍ. ພຣະຄັມພີກ່າວວ່າ, "ແຕ່ວ່າ, ພຣະຜູ້ເປັນເຈົ້າໄດ້ຖືວ່າການທີ່ດາວິດໄດ້ເຮັດນັ້ນແມ່ນການຊົ່ວຮ້າຍ" (2 ຊາມູເອນ 11:27). ນີ້ແມ່ນຈຸດຕ່ຳທີ່ສຸດທາງສິນທັມສຳລັບດາວິດຖ້າບໍ່ດັ່ງນັ້ນຄົງເປັນຊາຍທີ່ຍິ່ງໃຫຍ່!

ຜູ້ປະກາດພຣະທັມນາທານໄດ້ປະຈານໜ້າດາວິດ(ດ້ວຍຄວາມກ້າຫານບາງທີກໍເທົ່າກັນກັບຄວາມກ້າຫານທີ່ດາວິດໄດ້ປະເຊີນໜ້າກັບໂກລີອາດ) ແລະດາວິດໄດ້ຖິ້ມໃຈເກົ່າເອົາໃຈໃໝ່. ດາວິດໄດ້ອ້ອນວອນຕໍ່ພຣະເຈົ້າເພື່ອການອະພັຍໂທດແລະປົງແປງລາວອີກແລະຫຼັງຈາກນັ້ນ, ກໍໄດ້ຮັບການດົນໃຈຈາກພຣະເຈົ້າໃຫ້ຂຽນເພງສັຣເສີນບົດທີ່ 51, ຊຶ່ງສະທ້ອນໃຫ້ເຫັນຄຳອ້ອນວອນອະທິຖານໃນການຖິ້ມໃຈເກົ່າເອົາໃຈໃໝ່ຂອງລາວ.

ຄວາມຄິດຕ່າງໆໃນຫົວໃຈພຣະເຈົ້າຊົງເຫັນເໝືອນດັ່ງຮ່າງກາຍແລະພຣະອົງຊົງເບິ່ງກຽດສັກສີຢູ່ໃນຕົວຜູ້ນັ້ນ. ດາວິດໄດ້ບັນລະຍາຍເຖິງການທີ່ພຣະເຈົ້າຊົງເຮັດໃຫ້ລາວເຫັນຄວາມຜິດ ເໝືອນການສິດສອນຂອງສະຕິປັນຍາທີ່ຝັງເລິກໄວ້ຂ້າງໃນ. ການຖິ້ມໃຈເກົ່າເອົາໃຈໃໝ່ເກີດຂຶ້ນເມື່ອພວກເຮົາສາມາດເຫັນພວກເຮົາເອງຈາກທັສນະຂອງພຣະເຈົ້າ, ເມື່ອຜ່ານພຣະວິນຍານຂອງພຣະເຈົ້າເປັນພຍານໃຫ້ຫົວໃຈພວກເຮົາພວກເຮົາກໍແປຄວາມຄິດແລະການດີທັງຫຼາຍຂອງພວກເຮົາໃນແສງສວ່າງຂອງມາດຕະຖານພຣະເຈົ້າ.

ການສາຣະພາບໝາຍຄວາມວ່າເຫັນດີເຫັນພ້ອມກັບພຣະເຈົ້າ, ກຳຈັດຄວາມຊອບທັມ-ດ້ວຍຕົວເອງຫຼືການແກ້ຕົວ, ແລະຍອມຮັບຄວາມຜິດຂອງພວກເຮົາເອງ. ອັນນີ້ໝາຍຄວາມວ່າຫົວໃຈຂອງພວກເຮົາໄດ້ຮັບຄວາມສວ່າງໂດຍພຣະເຈົ້າແລະພວກເຮົາເຫັນຢ່າງແຈ່ມແຈ້ງວ່າບ່ອນໃດທີ່ພວກເຮົາຖືກຫຼອກໃຫ້ຫຼົງມາກ່ອນ ໂດຍກິເລດຕັນຫາຂອງພວກເຮົາແລະຜີມານ.

ການຮູ້ສຶກວ່າຜິດທັງປວງທີ່ມາຈາກພຣະເຈົ້າຍັງນຳຂໍ້ຄວາມຂອງພຣະເຈົ້າໃນການໃຫ້ອະພັຍໂທດບາບ. ສຳລັບພວກເຮົາຕ້ອງຫັນໜ້າສູ່ໄມ້ກາງແຂນສຳລັບການອະພັຍໂທດບາບ. ພຣະເຈົ້າໄດ້ໃຫ້ໂລຫິດຂອງພຣະຄຣິດເປັນເໝືອນເປົ້າໝາຍຂອງພຣະອົງຂອງການອະພັຍໂທດແກ່ພວກເຮົາ, ແລະໃນພຣະຄຣິດມີພຣະຄຸນອັນເຫຼືອລົ້ນສຳລັບຄວາມບາບທັງປວງຂອງພວກເຮົາ. ໃນພຣະອົງພວກເຮົາສາມາດຂາວສອາດກວ່າຫິມມະ. ພຣະວິນຍານຍັງຮັບປະກັນພວກເຮົາວ່າດັ່ງທີ່ພວກເຮົາໄດ້ຮັບການໃຫ້ອະພັຍໂທດແລ້ວແລະຖືກກໍ່ສ້າງຂຶ້ນໃໝ່, ຄວາມຊົມຊື່ນຍິນດີແລະຄວາມດີໃຈກໍກັບຄືນມາແລະຫົວໃຈທີ່ສະອາດໄດ້ຖືກສ້າງຂຶ້ນໃໝ່ໃນພວກເຮົາ. ຖືກສ້າງຂຶ້ນໝາຍຄວາມວ່າບັນຈຸໄວ້ໃນພວກເຮົາທີ່ເມື່ອກ່ອນບໍ່ເຄີຍມີ; ຂຶ້ນໃໝ່ອີກໝາຍຄວາມວ່າກຳລັງທີ່ເມື່ອກ່ອນກໍມີຢູ່ແຕ່ວ່າມັນອ່ອນເພັຽ.

ພຣະເຈົ້າເຕັມໃຈທີ່ຈະອະພັຍແລະກໍ່ສ້າງພວກທີ່ເຊື່ອຜູ້ທີ່ຖິ້ມໃຈເກົ່າເອົາໃຈໃໝ່. ເທິງພື້ນຖານການອະພັຍໂທດຂອງພຣະເຈົ້າ, ຜົວແລະເມັຽຕ້ອງເຕັມໃຈຍົກໂທດໃຫ້ກັນແລະກັນ. ການຍົກໂທດຊຶ່ງກັນແລະກັນໝາຍຄວາມວ່າເອົາຄວາມໂກດຮ້າຍແລະຄວາມຂົມຂື່ນອອກຈາກໃຈຂອງພວກເຮົາ. ໃນຖານະທີ່ເປັນຜູ້ຕິດຕາມພຣະຄຣິດພວກເຮົາຖືກບັນຊາໃຫ້ຍົກໂທດ, ແລະຄວາມເຈັບຊ້ຳໃຈທີ່ເປັນພິດພັຍອັນໃຫຍ່ຫຼວງຕໍ່ຫົວໃຈແລະຊີວິດຂອງພວກເຮົາເອງ. ການກໍ່ສ້າງໃຫ້ຄືນດີໃໝ່ແມ່ນອີກເຣື່ອງໃໝ່, ແລະມັນກໍເປັນໄປບໍ່ໄດ້ສເມີ, ເປັນພິເສດເມື່ອຝ່າຍທີ່ເຮັດຜິດບໍ່ຍອມຖິ້ມໃຈເກົ່າເອົາໃຈໃໝ່. ແຕ່ວ່າ, ເມື່ອກໍຣະນີຕ່າງໆຖືກມອບໄວ້ໃນພຣະຫັດຂອງພຣະເຈົ້າແລ້ວພຣະອົງກໍກະທຳການອັສຈັນ.

## 2. ຈົ່ງຈັບພວກໝາຈອກນ້ອຍ (ຍອດເພງ 2:15)

ດັ່ງພຣະທັມຍອດເພງແມ່ນເຣື່ອງຂອງຄວາມຮັກທີ່ສວຍງາມໃນພາບປະກອບທີ່ເປັນພາສາແບບກາບກອນ. ຢູ່ໃນເຣື່ອງນັ້ນ, ຍິງສາວຄົນນັ້ນທີ່ເປັນຄົນງານໃນສວນອະງຸ່ນເບິ່ງຄືວ່າອາດຈະມີບັນຫາທາງຄວາມສັມພັນໃນຊີວິດແຕ່ງງານຊຶ່ງພວກໝາຈອກນ້ອຍໄດ້ເຂົ້າມາທຳລາຍສວນອະງຸ່ນ, ພວກສັດນ້ອຍທີ່ພວກເຮົາຮູ້ເຖິງການທຳລາຍອັນຈິບຫາຍຂອງພວກມັນ. ບາງທີເຣື່ອງສວນອະງຸ່ນເປັນຕົວແທນຂອງຄວາມຮັກຂອງຄູ່ແຕ່ງງານແລະພວກໝາຈອກນ້ອຍເປັນຕົວແທນຂອງບັນຫານ້ອຍໆທີ່ກໍ່ຂຶ້ນໃນຮາກຖານຂອງຄວາມຮັກຂອງຄູ່ແຕ່ງງານ. ຄວາມຮອບຄອບແມ່ນຄວາມຈຳເປັນທີ່ຕ້ອງມີສຳລັບການຮັກສາໃຫ້ຄວາມສັມພັນໃນຊີວິດແຕ່ງງານໃຫ້ເຂັ້ມແຂງຂຶ້ນ. ບັນຫາເລັກໆນ້ອຍໆທີ່ປາກົດໃຫ້ເຫັນໃນທຸກໆຊີວິດແຕ່ງງານຕ້ອງກຳຈັດກັບພວກມັນກ່ອນທີ່ພວກມັນຈະທຳລາຍຄວາມສັມພັນ.

ຂໍ້ທ້າທາຍໃນຊີວິດແຕ່ງງານເປັນການຕິດໃນຊີວິດໃຫ້ຄວາມໃກ້ຊິດ, ມີຫຼາຍຢ່າງໂພດທີ່ຈະກ່າວເຖິງພວກມັນທັງໝົດ. ໃຫ້ພວກເຮົາເບິ່ງນຳກັນບາງຢ່າງ:

**ແມ່ນຫຍັງຄືສິ່ງທີ່ເພີ້ມຄວາມກົດດັນຕໍ່ຊີວິດແຕ່ງງານຂອງທ່ານ?**

ຫຍຸ້ງນຳຫຼາຍແນວ ໃຊ້ເວລາເບິ່ງຕິດຕາມລູກ

ການເງິນ ຕັດສິນໃຈຕໍ່ຫຼາຍແນວຈົນເກີນສ່ວນ

ບໍ່ເອົາໃຈໃສ່ ຂາດຕໍ່ຄຳສາບານເໜືອເປົ້າໝາຍ

_________ ________________________

_________ ________________________

ທ່ານຈຳເປັນຕ້ອງເຮັດຫຍັງແດ່ເພື່ອປັ່ງນແປງເພື່ອຜ່ອນຄາຍຄວາມກົດດັນເຫຼົ່ານີ້?

ບັນຫາອີກອັນນຶ່ງຊຶ່ງລວມທັງການສັບສົນກ່ຽວກັບຕຳແໜ່ງໃນຊີວິດແຕ່ງງານ; ຍາກໃນການລິເລີ້ມຕັ້ງການເປັນນຶ່ງດຽວກັນທາງດ້ານຄວາມຮູ້ສຶກກັບຊຶ່ງກັນແລະກັນ; ບໍ່ມີຄວາມສາມາດທີ່ຈະມີໂອ້ລົມກັນຢ່າງສັດຊື່ໂດຍປາສຈາກການຄັດແຍ້ງກັນຢ່າງຮຸນແຮງ; ແລະຂາດຄວາມເຂົ້າໃຈເຣື່ອງຂອງສ່ວນບຸກຄົນແລະເພດທີ່ແຕກຕ່າງກັນໃນຊີວິດແຕ່ງງານ.

ການສົນທະນາທີ່ສົມບູນດີໃນຊີວິດແຕ່ງງານຮັກສາຄວາມນັບຖືຕໍ່ຊຶ່ງກັນແລະກັນຂນະທີ່ສາມາດກ່າວເຖິງບັນຫາອັນຮ້າຍແຮງຕ່າງໆ. ສາມາດທີ່ຈະໂອ້ລົມກັນເຖິງເຣື່ອງຣາວທີ່ຈິງຈັງຢ່າງເປີດເຜີຍແລະສັດຊື່ໂດຍປາສຈາກການເຮັດໃຫ້ອີກຝ່າຍນຶ່ງຕ້ອງເປັນຝ່າຍປ້ອງກັນຕົວທີ່ນຳສູ່ການເປັນນຶ່ງດຽວກັນອັນຍິ່ງໃຫຍ່ໃນຊີວິດແຕ່ງງານ. ການບໍ່ເຫັນພ້ອມອັນໃດອັນນຶ່ງທີ່ບໍ່ສາມາດເວົ້າລົມກັນຢ່າງສະງົບແລະເປີດເຜີຍມີໂອກາດທີ່ຈະກາຍເປັນບັນຫາໃຫຍ່ກວ່າເກົ່າ. ພິເສດອັນນີ້ເປັນຄວາມຈິງຂອງການເປັນຫ່ວງໃນເຣື່ອງໃຫຍ່ (ດັ່ງເຊັ່ນການເງິນ, ສາຍສຳພັນຂອງຄອບຄົວ, ການເບິ່ງຕາມການເລືອກຂອງລູກ, ແລະການປ່ຽນແປງອາຊີບ) ຖ້າວ່າບໍ່ໄດ້ຮັບການແກ້ໄຂກໍສາມາດທຳລາຍສາຍສຳພັນຢ່າງຮ້າຍແຮງໄດ້.

ເວົ້າຢ່າງອ່ອນໂຍນຕໍ່ຊຶ່ງກັນແລະກັນ; ໂອ້ລົມເຣື່ອງຕ່າງໆໂດຍປາສຈາກການກ່າວຫາຊຶ່ງກັນແລະກັນ; ກ່າວເປີດຄວາມຄິດເຫັນຂອງທ່ານ, ແຕ່ຢ່າບັງຄັບພວກມັນໃສ່ຄູ່ຄອງຂອງທ່ານ. ຍອມຟັງຄວາມຄິດເຫັນຂອງຝ່າຍອື່ນຊຶ່ງລວມທັງຄວາມຮູ້ສຶກຂອງລາວດ້ວຍ; ເລືອກເວລາທີ່ຈະໂອ້ລົມກັນເຖິງເຣື່ອງສຳຄັນທີ່ທັງສອງສາມາດເຫັນພ້ອມນຳກັນ. ຊອກຫາຊ່ອງທາງໃຫ້ເປັນອັນນຶ່ງອັນດຽວກັນ, ບໍ່ແມ່ນພຽງແຕ່ເອົາຊະນະການໂຕ້ຖຽງກັນ; ພຍາຍາມທີ່ຈະເຂົ້າໃຈທັສນະຂອງຄົນອື່ນ. ຝຶກຊ້ອມໃນການຮັບຮູ້ຄວາມຮູ້ສຶກຂອງຜູ້ອື່ນ; ເຂົ້າສັມມະນາເຣື່ອງການແຕ່ງງານຂອງຄຣິສຕຽນຮ່ວມກັນ.

## 3. ຕິດພັນຝ່າຍວິນຍານ (ກິຈການ 18:24-26; ໂຣມ 16:3-5ກ)

ອາກິລາແລະປີຊະກີລາປາກົດຢ່າງເດັ່ນຊັດໃນພາກພຣະສັນຍາໃໝ່ໃນຖານະເປັນຄູ່ຜົວເມັຽທີ່ຍອມມອບກາຍຖວາຍຊີວິດໃນການຮັບໃຊ້ພຣະຜູ້ເປັນເຈົ້າຮ່ວມກັນ, ການເສັຽສະລະອັນຍິ່ງໃຫຍ່ຕໍ່ວຽກງານຂອງອົງພຣະຜູ້ເປັນເຈົ້າ. ລູກາໄດ້ກ່າວໄວ້ໃນພຣະທັມກິຈການ ທີ່ພວກເຂົາໄດ້ເປັນເຄື່ອງມືໃນການສ້າງສາວົກອາໂປໂລຜູ້ມີພອນສວັນໃນການເວົ້າຢ່າງມີໂວຫານດີ, ພວກເຂົາອະທິບາຍທາງຂອງພຣະເຈົ້າໃຫ້ແກ່ລາວຢ່າງຖືກຕ້ອງທີ່ສຸດ.

ທຸກໆສິ່ງໃນຊີວິດທີ່ຮຽກຮ້ອງເອົາເວລາແລະຄວາມສົນໃຈຈາກຄູ່ແຕ່ງງານ, ບໍ່ມີອັນໃດທີ່ມີຄ່າແພງຫຼືນຳການຕອບສນອງທີ່ດີກວ່າການໃສ່ໃຈໃນການເປັນນຶ່ງດຽວກັນໃນການເຕີບໂຕຝ່າຍວິນຍານ, ການຮັບໃຊ້ແບບຄຣິສຕຽນ, ແລະການມີສ່ວນຮ່ວມມືໃນຄຣິສຕະຈັກ. ແຕ່ວ່າ, ຖ້າພວກເຮົາບໍ່ລະມັດລະວັງພວກເຮົາສາມາດກາຍເປັນຜູ້ໄດ້ມີສ່ວນຮ່ວມມືຫຼາຍເກີນໄປຊຶ່ງເກີນເສັຍຕໍ່ຊີວິດແຕ່ງງານແລະຄອບຄົວຂອງພວກເຮົາ. ເຖິງປານນັ້ນຜົວແລະເມັຽທີ່ຮຽນຮູ້ໃນການສນັບສນູນຊຶ່ງກັນແລະກັນແລະຮັບໃຊ້ພຣະເຈົ້າເປັນທີມດຽວກັນຈະພົບຜົນປໂຍດແລະຄວາມເພິ່ງພໍໃຈໃນຖານະເປັນຄູ່ຜົວເມັຽ. ຊີວິດແຕ່ງງານຂອງພວກເຂົາຈະຖືກນັບໄວ້ສຳລັບພຣະເຈົ້າ. ອັນນີ້ມາຈາກການເປັນອັນນຶ່ງດຽວກັນໃນການຕິດພັນທາງຝ່າຍວິນຍານ, ຄວາມຮູ້ສຶກຢາກຮ່ວມກັນໃນການອຸທິດຕົນ, ແລະໃນການຮູ້ສຶກໃນການຊົງນຳຂອງອົງພຣະຜູ້ເປັນເຈົ້າ.

## ບົດຮຽນຊີວິດ

ຜົວແລະເມັຽສາມາດສ້າງພື້ນຖານສຳລັບການເຕີບໂຕ ໃນຖານະທີ່ເປັນຄູ່ຜົວເມັຽໂດຍຜ່ານການຕັດສິນໃຈຂອງພວກເຂົາຕໍ່ພຣະຄຣິດ. ການຕັດສິນໃຈອັນນີ້ສົ່ງເສີມໃຫ້ມີພຣະຄຸນແລະການຍົກໂທດໃນຊີວິດແຕ່ງງານ, ຊ່ວຍທັງຄູ່ໃຫ້ຮຽນຮູ້ການສົນທະນາແລະທຳງານຮ່ວມກັນເພື່ອແກ້ໄຂບັນຫາທົ່ວໆໄປ, ແລະນຳພວກເຂົາໃຫ້ໄດ້ເປັນທີມຮັບໃຊ້ພຣະຄຣິດ.

ພວກເຮົາຈະເຮັດແນວນີ້ໄດ້ຢ່າງໃດ?

- ຮຽນໃຫ້ເປັນຄົນສັດຊື່ຕໍ່ຊຶ່ງກັນແລະກັນກ່ຽວກັບຄວາມຫຼົ້ມເຫຼວຂອງທ່ານ, ທັງໃຫຍ່ແລະນ້ອຍ. ທາງທີ່ດີທີ່ສຸດໃນການປົວແປງຊີວິດແຕ່ງງານ ຄືການຕິດຕາມຄຳແນະນຳຂອງພຣະຄຣິດແລະຊອກຫາທາງເອົາທ່ອນໄມ້ອອກຈາກຕາຂອງທ່ານກ່ອນໆທີ່ຈະເອົາສັ້ຽນອອກຈາກຕາຄູ່ຄອງຂອງທ່ານ.
- ຝຶກຊ້ອມໃຊ້ພຣະຄຸນແລະການຍົກໂທດຂອງພຣະຄຣິດຕໍ່ຊຶ່ງກັນແລະກັນ.
- ຮຽນວິທີກຳຈັດກັບບັນຫານ້ອຍໆຂອງແຕ່ລະມື້ທີ່ກັດຮາກຖານຄວາມສັມພັນໃນຊີວິດແຕ່ງງານຂອງທ່ານ.
- ໃຊ້ເວລາທີ່ຈະຢູ່ກັບຊຶ່ງກັນແລະກັນແລະຢ່າປ່ອຍໃຫ້ໜ້າວຽກອັນຫຼວງຫຼາຍນັ້ນບັນຊາຊີວິດຂອງທ່ານແລະມ້າງເພຊີວິດແຕ່ງງານຂອງທ່ານ.
- ຮັບຟັງຊຶ່ງກັນແລະກັນໂດຍປາສຈາກການຕັດສິນຫຼືການລົງໂທດ, ແລະຮຽນຮູ້ທີ່ແບ່ງປັນຄວາມຮູ້ສຶກແທ້ຈິງແລະຂໍ້ກັງວົນໃຈຂອງທ່ານ.
- ຕິດພັນກັບຊຶ່ງກັນແລະກັນທາງຝ່າຍວິນຍານ, ການໃຫຍ່ຂຶ້ນໃນຖານະເປັນຄຣິສຕຽນ, ການຮັບໃຊ້ແລະການນະມັສການພຣະເຈົ້ານຳກັນ.